ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ຫ້ອງການກະຊວງ

ເລກທີ: 1132 /ຫກຊ

ນະຄອນຫຼວງວຽງຈັນ, ວັນທີ: 11 ພຶດສະພາ 2017

# ແຈ້ງການ

**ເຖິງ:** ບັນດາ ອົງການຈັດຕັ້ງ, ນິຕິບຸກຄົນ.

**ເລື່ອງ:** ການກວດກາປັບປຸງຂໍ້ມູນ, ການຕໍ່ທະບຽນລະຫັດຊື່ອິນເຕີເນັດ ຂັ້ນສາມພາຍໃຕ້ .LA ແລະ ການຈົດທະບຽນລະຫັດຊື່ອິນເຕີເນັດສູງສຸດ ແຫ່ງຊາດ .LA

- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ອິນເຕີເນັດ ລະຫັດຊື່ອິນເຕີເນັດ ຂອງ ສປປ ລາວ, ສະບັບເລກທີ 164/ລບ, ລົງວັນທີ 21 ມີນາ 2012.
- ອີງຕາມ ຂໍ້ກຳນົດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ ລະຫັດຊື່ອິນເຕີເນັດ, ສະບັບເລກທີ 691/ປທສ, ລົງວັນທີ 25 ມີນາ 2014.

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນນາມຜູ້ຮັບຜິດຊອບຄຸ້ມຄອງລະບົບ ແລະ ວຽກງານການຈົດທະບຽນລະຫັດຊື່ອິນເຕີເນັດສູງສຸດ ແຫ່ງຊາດ .LA ຂໍຖືເປັນກຽດແຈ້ງມາຍັງ ບັນດາອົງການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ທີ່ນຳໃຊ້ ແລະ ມີຈຸດປະສົງຕ້ອງການຈົດທະບຽນ ນຳໃຊ້ ລະຫັດຊື່ອິນເຕີເນັດສູງສຸດ ແຫ່ງຊາດທີ່ລົງທ້າຍດ້ວຍ .LA ເພື່ອຮັບຊາບດັ່ງຕໍ່ໄປນີ້:

1. ບັນດາລະຫັດຊື່ອິນເຕີເນັດຂັ້ນ 3 ພາຍໃຕ້ .LA(ເຊັ່ນ: .gov.la; .com.la; .edu.la; .net.la; .info.la; .org.la; .biz.la; .int.la; .mil.la ) ທີ່ໄດ້ໝົດອາຍຸການນຳໃຊ້ ນັບແຕ່ວັນທີ 12.03.2017 ທີ່ຜ່ານມາ, ໃຫ້ພາກສ່ວນກ່ຽວຂ້ອງເຂົ້າມາພົວພັນກັບ ສູນອິນເຕີເນັດແຫ່ງຊາດ ເພື່ອດຳເນີນການຕໍ່ອາຍຸການນຳໃຊ້.
2. ທ່ານສາມາດກວດລາຍການລະຫັດຊື່ດັ່ງກ່າວໄດ້ຜ່ານທາງເວັບໄຊຕາມທີ່ຢູ່ www.lanic.gov.la ຫຼື **ພົວພັນໄດ້ທີ່:** ສູນອິນເຕີເນັດ ແຫ່ງຊາດ, ອາຄານ A ຊັ້ນ 01 ຫ້ອງບໍລິການລະຫັດຊື່ອິນເຕີເນັດສູງສຸດ ແຫ່ງຊາດ .LA ຖະໜົນສາຍລົມ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສອບຖາມຂໍ້ມູນເພີ່ມເຕີມ ໂທ: +856-30-5745154, E-mail: support@lanic.gov.la.
3. ພາຍໃນ 30 ວັນ ນັບຈາກມື້ອອກແຈ້ງການ, ຫາກທ່ານຍັງບໍ່ມາພົວພັນດຳເນີນການ, ພວກເຮົາຈະຂໍປະຕິບັດຕາມລະບຽບການ.
4. ສຳລັບລະຫັດຊື່ອິນເຕີເນັດທີ່ລົງທ້າຍດ້ວຍ .LA ຖ້າທ່ານຕ້ອງການກວດສອບຂໍ້ມູນ ແລະ ວັນໝົດອາຍຸສາມາດກວດສອບຜ່ານທາງ https://whois.lanic.la/ ແລະ ຫາກເຫັນວ່າຂໍ້ມູນບໍ່ຖືກຕ້ອງ ຫຼື ຕ້ອງການຕໍ່ອາຍຸການນຳໃຊ້ແມ່ນກະລຸນາຕິດຕໍ່ກັບຜູ້ໃຫ້ບໍລິການທີ່ທ່ານຈົດທະບຽນນຳເພື່ອດຳເນີນການໃຫ້ຖືກຕ້ອງ.

ສະນັ້ນ, ຈຶ່ງຂໍແຈ້ງມາຍັງຜູ້ຊົມໃຊ້ ຈົດທະບຽນນຳໃຊ້ລະຫັດຊື່ອິນເຕີເນັດ ເພື່ອຮັບຊາບ ແລະ ປະຕິບັດໃຫ້ຖືກຕ້ອງຕາມລະບຽບການ.

ຮ.ກ ຫົວໜ້າຫ້ອງການ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຫ້ອງການ

ສາຍຝົນ ບຸດຈັນທະລາດ